**ການຢັ້ງຢືນຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ແລະ ເອກະສານທາງເລືອກອື່ນ**

**ກະຊວງທີ່ຢູ່ອາໄສ ແລະ ການພັດທະນາຕົວເມືອງຂອງສະຫະລັດ**

ການອະນຸມັດ OMB ເລກທີ 2577-0286
ໝົດອາຍຸ 30/06/2017

**ຈຸດປະສົງຂອງແບບຟອມ:** ກົດໝາຍວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງ (“VAWA”) ປົກປ້ອງຜູ້ສະໝັກ, ຜູ້ເຊົ່າ ແລະ ຜູ້ເຂົ້າຮ່ວມໃນບາງໂຄງການສະເພາະຂອງ HUD ຈາກການຖືກໄລ່ອອກ, ຖືກປະຕິເສດການຊ່ວຍເຫຼືອດ້ານທີ່ຢູ່ອາໄສ ຫຼື ຖືກຢຸດເຊົາການຊ່ວຍເຫຼືອດ້ານທີ່ຢູ່ອາໄສ ທີ່ອີງໃສ່ການກະທຳທີ່ເປັນຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນຕໍ່ກັບເຂົາເຈົ້າ ເຖິງແມ່ນກົດໝາຍຈະມີຊື່ແນວນີ້ກໍ່ຕາມ, ແຕ່ການປົກປ້ອງຕາມກົດໝາຍ VAWA ມີໃຫ້ແກ່ຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ແລະ ການຕິດຕາມກໍ່ກວນ ໂດຍບໍ່ສົນເລື່ອງເພດ, ລັກສະນະທາງເພດ ຫຼື ລົດສະນິຍົມທາງເພດ

**ການໃຊ້ແບບຟອມທາງເລືອກ:** ຖ້າທ່ານຂໍເອົາການປົກປ້ອງຕາມກົດໝາຍ VAWA ຈາກຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານ, ຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານອາດຈະເອົາຄຳຮ້ອງຂໍເປັນລາຍລັກອັກສອນໃຫ້ທ່ານທີ່ບອກໃຫ້ທ່ານສົ່ງເອກະສານຕ່າງໆກ່ຽວກັບເຫດການ ຫຼື ບັນດາເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ

ເພື່ອຈະຕອບສະໜອງຕໍ່ກັບຄຳຮ້ອງຂໍນີ້, ທ່ານ ຫຼື ຄົນອື່ນໃນນາມຕາງໜ້າໃຫ້ທ່ານສາມາດປະກອບແບບຟອມທາງເລືອກນີ້ ແລະ ສົ່ງມັນຫາຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານ ຫຼື ທ່ານອາດຈະສົ່ງໜຶ່ງໃນບັນດາເອກະສານຈາກພາກສ່ວນທີສາມຕໍ່ໄປນີ້ກໍ່ໄດ້:

(1) ເອກະສານທີ່ເຊັນໂດຍທ່ານ ຫຼື ພະນັກງານ, ຕົວແທນ ຫຼື ອາສາສະໝັກຂອງຜູ້ໃຫ້ບໍລິການຜູ້ເຄາະຮ້າຍ, ທະນາຍຄວາມ ຫຼື ຜູ້ຊ່ຽວຊານດ້ານການແພດ ຫຼື ຜູ້ຊ່ຽວຊານດ້ານສຸຂະພາບຈິດ (ເອີ້ນລວມກັນວ່າ “ຜູ້ຊ່ຽວຊານ”) ທີ່ທ່ານໄດ້ຂໍການຊ່ວຍເຫຼືອຈາກທີ່ກ່ຽວກັບຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ຫຼື ຜົນກະທົບຈາກການທາລຸນຕ່າງໆພາຍໃຕ້ບົດລົງໂທດຂອງການເວົ້າຄວາມເທັດ, ເອກະສານຕ້ອງລະບຸແຈ້ງວ່າຜູ້ຊ່ຽວຊານເຊື່ອວ່າເຫດການ ຫຼື ບັນດາເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ໄດ້ເກີດຂຶ້ນຈິງແທ້ ແລະ ເປັນໄປຕາມຄຳນິຍາມຂອງ “ຄວາມຮຸນແຮງໃນຄອບຄົວ”, “ຄວາມຮຸນແຮງໃນການນັດພົບຊູ້ສາວ”, “ການລ່ວງລະເມີດທາງເພດ”, ຫຼື “ການຕິດຕາມກໍ່ກວນ” ໃນກົດລະບຽບຂອງHUD ຢູ່ຂໍ້ 24 CFR 5.2003

(2) ບັນທຶກຂອງໜ່ວຍງານບັງຄັບໃຊ້ກົດໝາຍ, ສານ ຫຼື ໜ່ວຍງານບໍລິຫານຂັ້ນລັດຖະບານກາງ, ລັດ, ປະຈຳຊົນເຜົ່າ, ປະຈຳເຂດດິນແດນ ຫຼື ທ້ອງຖິ່ນ; ຫຼື

(3) ຕາມການຕັດສິນໃຈຂອງຜູ້ໃຫ້ບໍລິການທີ່ຢູ່ອາໄສ, ຄຳຖະແຫຼງ ຫຼື ຫຼັກຖານອື່ນທີ່ສະໜອງໃຫ້ໂດຍຜູ້ຮ້ອງຂໍ ຫຼື ຜູ້ເຊົ່າ

**ການສົ່ງເອກະສານ:** ໄລຍະເວລາສົ່ງເອກະສານແມ່ນ 14 ວັນເຮັດວຽກນັບຈາກວັນທີທີ່ທ່ານໄດ້ຮັບຄຳຮ້ອງຂໍເປັນລາຍລັກອັກສອນຈາກຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານທີ່ບອກໃຫ້ທ່ານສະໜອງເອກະສານກ່ຽວກັບການເກີດຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ຜູ້ຢູ່ອາໄສຂອງທ່ານອາດຈະ, ແຕ່ບໍ່ຈຳເປັນກໍ່ໄດ້, ຂະຫຍາຍໄລຍະເວລາສົ່ງເອກະສານອອກໄປ

ຖ້າທ່ານຮ້ອງຂໍເອົາການຂະຫຍາຍເວລາ ຖ້າຂໍ້ມູນທີ່ຮ້ອງຂໍເອົາບໍ່ໄດ້ຮັບພາຍໃນ 14 ວັນເຮັດວຽກນັບຈາກເວລາທີ່ທ່ານໄດ້ຮັບຄຳຮ້ອງຂໍເອົາເອກະສານນັ້ນ ຫຼື ວັນທີການຂະຫຍາຍເວລາທີ່ຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານສະໜອງໃຫ້, ຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານບໍ່ຈຳເປັນຕ້ອງໃຫ້ການປົກປ້ອງຕາມກົດໝາຍ VAWA ໃດໆແກ່ທ່ານ ການແຈກຢາຍ ຫຼື ການອອກແບບຟອມນີ້ບໍ່ໃຫ້ໃຊ້ເປັນຄຳຮ້ອງຂໍເອົາການຢັ້ງຢືນເປັນລາຍລັກອັກສອນ

**ການຮັກສາຄວາມລັບ:** ທຸກຂໍ້ມູນທີ່ສະໜອງໃຫ້ແກ່ຜູ້ໃຫ້ບໍລິການທີ່ຢູ່ອາໄສກ່ຽວກັບເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ຈະຖືກຮັກສາໄວ້ເປັນຄວາມລັບ ແລະ ລາຍລະອຽດດັ່ງກ່າວຈະບໍ່ຖືກປ້ອນເຂົ້າຖານຂໍ້ມູນໃດໆທີ່ໃຊ້ຮ່ວມກັນ ພະນັກງານຂອງຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານຕ້ອງບໍ່ມີການເຂົ້າເຖິງລາຍລະອຽດເຫຼົ່ານີ້ ຍົກເວັ້ນເພື່ອໃຫ້ ຫຼື ປະຕິເສດການປົກປ້ອງຕາມກົດໝາຍ VAWA ແກ່ທ່ານ ແລະ ພະນັກງານດັ່ງກ່າວບໍ່ສາມາດເປີດເຜີຍຂໍ້ມູນນີ້ກັບບຸກຄົນ ຫຼື ນິຕິບຸກຄົນອື່ນ ຍົກເວັ້ນໃນຂອບເຂດທີ່ການເປີດເຜີຍນັ້ນແມ່ນ: (i) ໄດ້ຮັບການຍິນຍອມເຫັນດີຈາກທ່ານເປັນລາຍລັກອັກສອນໃນການເປີດເຜີຍທີ່ຈຳກັດເວລາ; (ii) ຈຳເປັນເພື່ອໃຊ້ໃນການດຳເນີນຄະດີເລື່ອງການໄລ່ອອກຈາກບ່ອນເຊົ່າ ຫຼື ການໄຕ່ສວນກ່ຽວກັບການຢຸດເຊົາການຊ່ວຍເຫຼືອ; ຫຼື (iii) ຕາມການກຳນົດໄວ້ໂດຍກົດໝາຍທີ່ນຳໃຊ້

<u>ຕ້ອງປະກອບຂໍ້ມູນໂດຍ ຫຼື ໃນນາມຕາງໜ້າໃຫ້ຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ</u>

1. ວັນທີທີ່ຜູ້ເຄາະຮ້າຍໄດ້ຮັບຄຳຮ້ອງຂໍເປັນລາຍລັກອັກສອນ:
_______________________________________

2. ຊື່ຂອງຜູ້ເຄາະຮ້າຍ: _______________________________________________________________

3. ຊື່ຂອງທ່ານ (ຖ້າແຕກຕ່າງຈາກຊື່ຂອງຜູ້ເຄາະຮ້າຍ)___________________________________________

4. ຊື່ຂອງສະມາຊິກຄອບຄົວອື່ນທີ່ມີຊື່ໃນສັນຍາເຊົ່າ:_____________________________________________

_______________________________________________________________________________

5. ບ່ອນຢູ່ຂອງຜູ້ເຄາະຮ້າຍ: _________________________________________________________

6. ຊື່ຂອງຜູ້ກະທຳຜິດທີ່ຖືກກ່າວຫາ (ຖ້າຮູ້ຈັກ ແລະ ສາມາດເປີດເຜີຍໄດ້ຢ່າງປອດໄພ):_____________________

_______________________________________________________________________________

7. ຄວາມສຳພັນຂອງຜູ້ກະທຳຜິດທີ່ຖືກກ່າວຫາກັບຜູ້ເຄາະຮ້າຍ:____________________________________

8. ວັນທີ ແລະ ເວລາຂອງເຫດການ (ຖ້າຮູ້):_______________________________________________
___________________________________________________________________

10. ສະຖານທີ່ເກີດເຫດການ:_____________________________________________________________

ດ້ວຍຄຳເວົ້າຂອງທ່ານເອງ, ຈົ່ງອະທິບາຍເຫດການທີ່ເກີດຂຶ້ນ:

________________________________________

________________________________________

________________________________________

________________________________________

ການຈື່ໄດ້ຂອງຂ້າພະເຈົ້າ, ແລະ ບຸກຄົນທີ່ມີຊື່ຂ້າງເທິງໃນຂໍ້ 2 ແມ່ນ ຫຼື ເຄີຍແມ່ນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ຂ້າພະເຈົ້າຮັບຮູ້ວ່າການໃຫ້ຂໍ້ມູນທີ່ບໍ່ເປັນຈິງສາມາດມີຜົນເສຍຫາຍຕໍ່ກັບການມີສິດເຂົ້າຮ່ວມໂຄງການ ແລະ ສາມາດເປັນພື້ນຖານສຳລັບການປະຕິເສດການເຂົ້າຢູ່, ການຢຸດເຊົາການຊ່ວຍເຫຼືອ ຫຼື ການໄລ່ອອກໄດ້

ລາຍເຊັນ ______________________________ ເຊັນໃນ (ວັນທີ) ________________________

**ພາລະໃນການລາຍງານຂອງປະຊາຊົນທົ່ວໄປ:** ພາລະໃນການລາຍງານຂອງປະຊາຊົນສຳລັບການເກັບຂໍ້ມູນນີ້ຄາດວ່າ 1 ນາທີຕໍ່ຄຳຕອບໂດຍສະເລ່ຍ ນີ້ລວມທັງເວລາສຳລັບການເກັບເອົາ, ການກວດເບິ່ງ ແລະ ລາຍງານຂໍ້ມູນ ຂໍ້ມູນທີ່ສະໜອງໃຫ້ແມ່ນເພື່ອໃຊ້ໂດຍຜູ້ໃຫ້ບໍລິການທີ່ຢູ່ອາໄສເພື່ອຮ້ອງຂໍເອົາການຢັ້ງຢືນວ່າຜູ້ຮ້ອງຂໍ ຫຼື ຜູ້ເຊົ່າແມ່ນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ຂໍ້ມູນນີ້ຂຶ້ນກັບຂໍ້ກຳນົດການຮັກສາຄວາມລັບຂອງກົດໝາຍ VAWA. ໜ່ວຍງານນີ້ບໍ່ສາມາດເກັບເອົາຂໍ້ມູນນີ້ໄດ້ ແລະ ທ່ານບໍ່ຈຳເປັນຕ້ອງປະກອບແບບຟອມນີ້, ເວັ້ນເສຍແຕ່ວ່າມັນສະແດງໝາຍເລກຄວບຄຸມທີ່ຖືກຕ້ອງໃນປັດຈຸບັນຂອງຫ້ອງການຄຸ້ມຄອງ ແລະ ງົບປະມານ